ນ.ສ.ພ ລາຍວັນ

# ວຽງຈັນໃໝ່

VIENTIANE MAI NEWSPAPER

ສຳນັກງານເລກທີ 36, ຖະໜົນ ເຊດຖາທິລາດ, ຕູ້ ປ.ນ 989, ແຟັກ: 215989, ໂທ. 212623-4

www. vientianemai.net ; E-mail: vtm.khao@gmail.com ປີທີ 40 ສະບັບທີ 128.302

ວັນອັງຄານ 26 ກໍລະກົດ 2016

ແຮມ ໗ ຄ່ຳ ເດືອນແປດ ພສ ໒໕໕໙

## ມູນນິທິຟື້ນຟູສຸຂະພາບລາວ ຊ່ວຍເຫຼືອ ໖ ໂຮງໝໍເມືອງ ແຂວງຊຽງຂວາງ




☆ ມູນນິທິຟື້ນຟູສຸຂະພາບລາວ (Lao Rehabilitation Foundation, Inc. ຈາກ USA) ໄດ້ນຳເອົາເຄື່ອງມື ແລະ ອຸປະກອນການແພດທີ່ຈຳເປັນ ໄປມອບໃຫ້ໂຮງໝໍເມືອງໝອກ ເມືອງຄູນ ໜອງແຮດ ເມືອງຄຳ ພູກູດ ແລະ ເມືອງຜາໄຊ ແຂວງຊຽງຂວາງ ເພື່ອຊ່ວຍພັດທະນາການບໍລິການຄົນເຈັບຢູ່ໃນໂຮງໝໍໃຫ້ດີຂຶ້ນ ໂດຍສະເພາະແມ່ມານ ແລະ ເດັກນ້ອຍ ທັງເປັນການສ້າງຄວາມເຂັ້ມແຂງ ແລະ ຄວາມຍືນຍົງໃຫ້ແກ່ບັນດາໂຮງໝໍດັ່ງກ່າວ.

ອ່ານຕໍ່ໜ້າ ໗

ເຄື່ອງຊ່ວຍເຫຼືອທີ່ນຳມາມອບຄັ້ງນີ້ປະກອບມີເຄື່ອງ Fetal Doppler Monitoring Nebulizer Oximeter Suction machine Life box ແລະ ເຄື່ອງ Ultrasound ລວມເປັນມູນຄ່າ 23.305 ໂດ ລາສະຫະລັດ ຫຼື ປະມານ 118,49 ລ້ານກີບ ເຊິ່ງພາຍຫຼັງ ການມອບຄັ້ງນີ້ Lao Rehabilitation Foundation, Inc ຍັງມີແຜນຈະໃຫ້ການຊ່ວຍເຫຼືອເຄື່ອງມື ແລະ ອຸປະກອນການແພດທີ່ມີຄວາມຈຳເປັນໃຫ້ແກ່ບັນດາໂຮງໝໍເມືອງ ແຂວງຫົວພັນ ແລະ ແຂວງໄຊສົມບູນ ຕື່ມອີກ.

ພິທີມອບ-ຮັບເຄື່ອງຊ່ວຍເຫຼືອດັ່ງກ່າວ ໄດ້ຈັດຂຶ້ນກາງເດືອນມິຖຸນາ 2016 ຜ່ານມາ ຢູ່ໂຮງໝໍເມືອງຄູນ ດຣ. Luc Janssens ປະທານ Lao Rehabilitation Foundation, Inc ແລະ ຮັບໂດຍທ່ານ ຄຳຫຼ້າ ສິດວົງໄຊ ຮອງເຈົ້າເມືອງຄູນ ໂດຍມີຫົວໜ້າຫ້ອງການສາທາລະນະສຸກເມືອງ ອຳນວຍການໂຮງໝໍ ແລະ ພະນັກງານກຽວຂອງເຂົ້າຮ່ວມ.